BANK OF THE LAO PDR
ທະນາຄານແຫ່ງ ສປປ ລາວ
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທຄຕລ ອຸດົມໄຊຮັບໃຊ້ປະຊາຊົນດ້ວຍໃຈຈິງ




ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສາຂາອຸດົມໄຊ ສາມາດດຳເນີນທຸລະກຳການເງິນດ້ວຍດີສະເໝີມາ ໂດຍສະເພາະໄດ້ປະຕິບັດແຜນຍຸດທະສາດປະຈຳປີຂອງ ທຄຕລ ສຳນັກງານກໍ່ຄືສາຂາໃຫ້ບັນລຸຕາມແຜນການໂດຍໄດ້ບໍລິການລູກຄ້າດ້ວຍໃຈ, ຮັກສາຖານລູກຄ້າເກົ່າ ແລະ ຂະຫຍາຍຖານລູກຄ້າໃໝ່; ສິ່ງສຳຄັນຄະນະສາຂາໄດ້ສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ; ຕີຖອຍປາກົດການຫຍໍ້ທໍ້ ແລະ ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກໃຫ້ແໜ້ນແຟ້ນເຮັດໃຫ້ການຈັດຕັ້ງປະຕິບັດວຽກງານພາຍໃນສາຂາມີຜົນສຳເລັດເປັນກ້າວໆ.

ທ່ານນາງ ຈັນສະໄໝ ສຸລິຍະປັນຍາ ຮອງຫົວໜ້າ ທຄຕລ ສາຂາ ອຸດົມໄຊໄດ້ແຈ້ງໃຫ້ຮູ້ວ່າ: ໃນປີ 2020 ດ້ານຊັບສິນ-ໜີ້ສິນປະຕິບັດໄດ້ 825 ຕື້ກີບ, ທຽບໃສ່ແຜນປີ 2020 ປະຕິບັດໄດ້ 116%, ທຽບໃສ່ 2019 ປະຕິບັດໄດ້ 130%; ດ້ານເງິນຝາກ ປະຕິບັດໄດ້ 827 ຕື້ກີບ, ທຽບໃສ່ແຜນປີ 2020 ປະຕິບັດໄດ້ 118 %, ທຽບໃສ່ 2019 ປະຕິບັດໄດ້ 131%; ດ້ານເງິນກູ້ປະຕິບັດໄດ້ 117 ຕື້ກີບ, ທຽບໃສ່ແຜນປີ 2020 ປະຕິບັດໄດ້ 88%, ທຽບໃສ່ 2019 ປະຕິບັດໄດ້ 109%.

ບັນຫາພົ້ນເດັ່ນໃນປີ 2020; ທຄຕລ ສາຂາອຸດົມໄຊ ໄດ້ເອົາໃຈໃສ່ບໍລິການເບີກຈ່າຍເງິນຊົດເຊີຍໃຫ້ກັບປະຊາຊົນທີ່ຖືກຜົນກະທົບຈາກໂຄງການກໍ່ສ້າງທາງລົດໄຟໃນປີ 2020 ຕາມແນວທາງຂອງພັກ ແລະ ລັດຖະບານ ຊຶ່ງໄດ້ເບີກຈ່າຍເປັນງວດ 4 ຈຳນວນ 370 ຄອບຄົວ, ມູນຄ່າ 59,96 ຕື້ກີບ ໄດ້ສຳເລັດ; ເອົາໃຈໃສ່ບໍລິການເບີກຈ່າຍເງິນໂພສະນາການຂອງໂຄງການອາຫານໂລກ WFP ໃຫ້ປະຊາຊົນຢູ່ເມືອງຫຼາ ແລະ ເມືອງນາໝໍ້ 221 ຄົນ; ເອົາໃຈໃສ່ເກັບລາຍຮັບຄ່າທຳນຽມທາງ ແລະ ພາສີທີ່ດິນໂດຍສົມທົບກັບອາກອນປະຈຳແຂວງ, ອາກອນປະຈຳຢູ່ແຕ່ລະເມືອງ ແລະ ຕົວແທນ BCOME ລົງສ້າງຂະບວນການເກັບລາຍຮັບປະຈຳປີ 2020 ຈຳນວນ 16 ຄັ້ງ, ເທສະບານເມືອງໄຊ 3 ຄັ້ງ, ເມືອງຫຼາ 1 ຄັ້ງ. ເມືອງຮຸນ 3 ຄັ້ງ, ນາໝໍ້ 2 ຄັ້ງ, ເມືອງປາກແບງ 6 ແລະ ເມືອງງາ 1 ຄັ້ງ, ປະຈຸບັນໄດ້ຂະຫຍາຍຕົວແທນ BCOME ຄົບທຸກເມືອງ, ເຊິ່ງຕົວແທນດັ່ງກ່າວສາມາດຮັບຊຳລະຄ່າທຳນຽມທາງ, ພາສີທີ່ດິນໄດ້, ນອກຈາກນີ້ຕົວແທນ BCOME ຍັງສາມາດບໍລິການໂອນເງິນ, ຝາກເງິນ ແລະ ຖອນເງິນຈາກບັນຊີ ທຄຕລ ໄດ້ເຊິ່ງສາມາດອຳນວຍຄວາມສະດວກໃຫ້ກັບພໍ່ແມ່ປະຊາຊົນທີ່ຢູ່ຫ່າງໄກຈາກສາຂາ ແລະ ໜ່ວຍບໍລິການຂອງ ທຄຕລ.

ສຳລັບວຽກງານປ້ອງກັນພະຍາດໂຄວິດ-19; ກໍ່ໄດ້ເອົາໃຈໃສໃນການຈັດຕັ້ງປະຕິບັດຕາມມາດຕະການ ແລະ ແຈ້ງການຂອງລັດຖະບານວາງອອກຢ່າງເຂັ້ມງວດໂດຍສະເພາະການປ້ອງກັນລູກຄ້າ ແລະ ພະນັກງານຢູ່ສາຂາ ແລະ ໜ່ວຍບໍລິການໂດຍມີການວັດແທກອຸນນະພູມກ່ອນເຂົ້າຫ້ອງການ, ຕັ້ງຈຸດລ້າງມືດ້ວຍນໍ້າສະອາດໃສ່ສະບູ ແລະ ລ້າງມືດ້ວຍເຈວແອວກໍຮໍ, ເຮັດປ້າຍບອກແນະນຳລູກຄ້າໃຫ້ລ້າງມື ແລະ ສວມໃສ່ຜ້າອັດປາກກ່ອນເຂົ້າຫ້ອງການ, ນອກຈາກນີ້ຍັງແນະນຳແມ່ບ້ານອານາໄມທຳຄວາມສະອາດຢ່າງສະໝ່ຳສະເໝີ, ເພື່ອສຸຂະພາບທີ່ດີ ແລະ ເພື່ອປ້ອງກັນພະຍາດລະບາດດັ່ງກ່າວ.

ທ່ານຮອງຫົວໜ້າ ທຄຕລ ສາຂາອຸດົມໄຊໄດ້ແຈ້ງໃຫ້ຮູ້ວ່າ: ທິດທາງແຜນການຈັດຕັ້ງປະຕິບັດໃນປີ 2021 ຍັງຈະສືບຕໍ່ການຂະຫຍາຍສິນເຊື່ອໃຫ້ບັນລຸຕາມແຜນການທີ່ຂຶ້ນໄວ້ ແລະ ເຂົ້າເຖິງບັນດາຫົວໜ່ວວຍທຸລະກິດ SMEs ຫຼື ກຸ່ມລູກຄ້າເປົ້າໝາຍທີ່ເປັນລູກຄ້າລາຍໃຫຍ່; ສືບຕໍ່ຕິດຕາມ ແລະ ທົບທວນເຈລະຈາກັບລູກຄ້າໃນການແກ້ໄຂໜີ້ສິນຮ່ວມກັນຕາມລະບຽບ, ນະໂຍບາຍ ແລະ ຂັ້ນຕອນຂອງວຽກງານສິນເຊື່ອ; ປະຕິບັດຕາມລະບຽບ ແລະ ຍຸດທະສາດໃນການແກ້ໄຂໜີ້ສິນຕາມລະບຽບກົດໝາຍ; ສືບຕໍ່ລະດົມທຶນຈາກທຸກພາກສ່ວນທີ່ເຫັນວ່າມີຄວາມເປັນໄປໄດ້ໂດຍສະເພາະແມ່ນບັນດາໂຄງການ, ບໍລິສັດໃຫ່ຍກໍ່ຄືບັນດາຫ້າງຮ້ານ ແລະ ບັນດາພະແນກການຕ່າງໆສືບຕໍ່ໂຄສະນາຂາຍຜະລິດຕະພັນບັດ Visa Credit and Visa Debit, BCEL One ATM ແລະ BCELONE PAY ໃຫ້ບັນດາພະນັກງານ-ລັດຖະກອນແລະບັນດາຫ້າງຮ້ານ, ຕ່າງໆນຳຜູ້ທີ່ມີເງື່ອນໄຂເພື່ອນຳໃຊ້ຜະລິດຕະພັນຂອງ ທຄຕລ ໃຫ້ນັບມື້ນັບຫຼາຍຂຶ້ນ. ສືບຕໍ່ລົງໂຄສະນາແລະຊອກຫາລູກຄ້າຕົວແທນ Bcome ນຳບັນດາເມືອງທີ່ເຫັນວ່າມີຄວາມເໝາະສົມ ແລະ ສືບຕໍ່ລົງທົບທວນບັນດາໂຄງການ Bill Payment ການຊຳລະຄ່າໄຟຟ້າ ແລະ ຊຳລະຄ່ານໍ້າປະປາເພື່ອຖອດຖອນບົດຮຽນນຳເຈົ້າຂອງໂຄງການ.

**# ຂ່າວ-ພາບ: ຮັດສະໝີ ດວງສັດຈະ**

## ຮັກບ້ານເກີດເມືອງນອນໃຊ້ ຈ່າຍທອນເປັນເງິນກີບ